## ຕໍາແໜ່ງ: ວິຊາການ ພົວພັນລູກຄ້າ (ສິນເຊື່ອ) ຈໍານວນ: 7 ຕໍາແໜ່ງ

### ເງື່ອນໄຂຂອງຜູ້ສະໝັກ:

#### 1. ໜ້າທີ່ຮັບຜິດຊອບ

- ຈັດຕັ້ງປະຕິບັດບັນດາວຽກງານທີ່ພົວພັນເຖິງການສະໜອງສິນເຊື່ອໃຫ້ລູກຄ້າບຸກຄົນ, ວິສາຫະກິດ; ຊອກຫາ ແລະ ເບິ່ງແຍງລູກຄ້າໃໝ່ ແລະ ເກົ່າ; ຕີລາຄາລູກຄ້າ, ການເຄື່ອນໄຫວດໍາເນີນທຸລະກິດ, ສະພາບຖານະການເງິນ; ຕີລາຄາຫຼັກຊັບຄໍ້າປະກັນ ແລະ ປະກອບເອກສານຂອງລູກຄ້າ.
- ກວດກາ, ຕິດຕາມຢ່າງເຂັ້ມງວດກ່ອນ ແລະ ຫຼັງການປ່ອຍສິນເຊື່ອ.
- ຕິດຕາມ, ແນະນໍາໃຫ້ລູກຄ້າຈ່າຍດອກເບ້ຍ, ຕົ້ນທຶນ ແລະ ບັນດາຄ່າບໍລິການອື່ນ ຄົບຖ້ວນ ແລະ ຖືກຕ້ອງຕາມເວລາ.
- ຊີ້ນໍາຈັດຕັ້ງປະຕິບັດແຕ່ລະວຽກງານ: ຊອກຫາ, ຕ້ອນຮັບລູກຄ້າໃໝ່; ສ້າງສາຍສໍາພັນ, ເບິ່ງແຍງ ແລະ ຮັກສາຄວາມສໍາພັນເປັນປະຈໍາກັບລູກຄ້າກ່ຽວກັບວຽກງານລະດົມທຶນ.
- ຈັດຕັ້ງປະຕິບັດວຽກງານການຂາຍຜະລິດຕະພັນບໍລິການຂອງທະນາຄານ.
- ຈັດຕັ້ງປະຕິບັດບັນດາວຽກງານອື່ນໆຕາມການມອບໝາຍຂອງຫົວໜ້າພະແນກ.

#### 2. ເງື່ອນໄຂ ແລະ ມາດຕະຖານ

- ເປົ້າໝາຍ: ຊາຍ/ຍິງ, ອາຍຸບໍ່ເກີນ 35 ປີ
- ລະດັບການສຶກສາ: ຈົບປະລິນຍາຕີຂຶ້ນໄປ
- ຂະແໜງ: ການເງິນການທະນາຄານ, ບໍລິຫານທຸລະກິດ, ການຄ້າ
- ຄະແນນສະເລ່ຍລວມສໍາລັບຜູ້ຈົບຢູ່ ສສ ຫວຽດນາມ: ຈັດປະເພດແຕ່ເກດ (ຄະແນນ C) ຂຶ້ນໄປ
- ມີຄວາມຮູ້ໃນການນໍາໃຊ້ຄອມພິວເຕີ້ (Microsoft Office)
- ຜູ້ສະໝັກຜູ້ໃດສາມາດນໍາໃຊ້ພາສາຫວຽດນາມໄດ້ຢ່າງຄ່ອງແຄ້ວ ແລະ ມີປະສົບການໃນວຽກງານສິນເຊື່ອຈະພິຈາລະນາເປັນພິເສດ
- ດ້ານສຸຂະພາບ: ມີສຸຂະພາບແຂງແຮງ

#### 3. ເອກະສານຍື່ນສະໝັກ

- ແບບຟອມສະໝັກວຽກ.
- ບັດປະຈໍາຕົວ ຫຼື ສໍາມະໂນຄົວ (ສະບັບ Copy).
- ໃບປະກາດ, ໃບຢັ້ງຢືນ, ໃບຄະແນນ (ສະບັບ Copy).
- ໃບຢັ້ງຢືນທີ່ຢູ່ ບໍ່ເກີນ 03 ເດືອນ.

## ຕໍາແໜ່ງ: ວິຊາການ ພັດທະນາລູກຄ້າເງິນຝາກອົງກອນ ຈໍານວນ: 01 ຕໍາແໜ່ງ

### ເງື່ອນໄຂຂອງຜູ້ສະໝັກ:

#### 1. ໜ້າທີ່ຮັບຜິດຊອບ

- ຮັບຜິດຊອບໃນການພັດທະນາລູກຄ້າເງິນຝາກອົງກອນ, ຮັກສາ ແລະ ພັດທະນາສາຍພົວພັນກັບລູກຄ້າ ໂດຍສຸມໃສ່ວຽກງານການລະດົມທຶນຈາກລູກຄ້າດັ່ງກ່າວ ພ້ອມດຽວກັນນັ້ນ ດໍາເນີນງານດ້ານການຕະຫຼາດ ແລະ ຂາຍຜະລິດຕະພັນການບໍລິການທະນາຄານທີ່ເໝາະສົມຂອງທະນາຄານ ໃຫ້ກັບລູກຄ້າທີ່ເປັນຄູ່ຮ່ວມທຸລະກິດ
- ດູແລ ແລະ ພັດທະນາສາຍພົວພັນກັບລູກຄ້າເງິນຝາກອົງກອນ
- ຮັກສາ ແລະ ດູແລຢ່າງຕໍ່ເນື່ອງ ສໍາລັບລູກຄ້າເງິນຝາກອົງກອນທີ່ມີຢູ່ປັດຈຸບັນ ເພື່ອຮັບປະກັນວ່າລູກຄ້າໄດ້ຮັບການບໍລິການຢ່າງຄົບຖ້ວນ, ທັນເວລາ ແລະ ເປັນມືອາຊີບ
- ສ້າງ ແລະ ອັບເດດຖານຂໍ້ມູນລູກຄ້າເງິນຝາກອົງກອນ ເພື່ອຮັບໃຊ້ວຽກງານຄຸ້ມຄອງສາຍພົວພັນ
- ດໍາເນີນການຕິດຕໍ່ ແລະ ສ້າງສາຍພົວພັນກັບລູກຄ້າເງິນຝາກອົງກອນທີ່ມີທ່າແຮງ ເພື່ອຂະຫຍາຍຖານລູກຄ້າ
- ດໍາເນີນການຕະຫຼາດ, ເຈລະຈາ ແລະ ຈັດຕັ້ງປະຕິບັດຜະລິດຕະພັນລະດົມທຶນ (ເງິນຝາກມີກໍານົດ, ເງິນຝາກປະຫຍັດ...) ກັບລູກຄ້າເງິນຝາກອົງກອນ
- ເຈລະຈາ ອັດຕາດອກເບ້ຍການລະດົມທຶນ ແລະ ເງື່ອນໄຂການຮ່ວມມືທີ່ດີສຸດໃຫ້ກັບທະນາຄານ
- ຕິດຕາມ ແລະ ຄຸ້ມຄອງຍອດເງິນຝາກຈາກລູກຄ້າເງິນຝາກອົງກອນ, ດໍາເນີນການຮັກສາ ແລະ ເພີ່ມທະວີດ້ານແຫຼ່ງທຶນ
- ນໍາສະເໜີ ແລະ ປະສານງານໃນການຈັດຕັ້ງປະຕິບັດດ້ານຜະລິດຕະພັນການບໍລິການທີ່ເໝາະສົມຂອງທະນາຄານ ໃຫ້ແກ່ລູກຄ້າເງິນຝາກອົງກອນ (ການຊໍາລະສະສາງລະຫວ່າງປະເທດ, ອັດຕາແລກປ່ຽນ, ການຄໍ້າປະກັນ...)
- ປະສານງານກັບພະແນກ ແລະ ຫົວໜ່ວຍທີ່ກ່ຽວຂ້ອງ ເພື່ອຕອບສະໜອງຄວາມຕ້ອງການຂອງລູກຄ້າເງິນຝາກອົງກອນຢ່າງຄົບຖ້ວນ
- ຈັດຕັ້ງປະຕິບັດບັນດາວຽກງານອື່ນໆຕາມການມອບໝາຍຂອງຫົວໜ້າພະແນກ.

#### 2. ເງື່ອນໄຂ ແລະ ມາດຕະຖານ

- ເປົ້າໝາຍ: ເພດຍິງ, ອາຍຸບໍ່ເກີນ 35 ປີ, ມີຮູບຮ່າງບຸກຄະລິກທີ່ດີ
- ລະດັບການສຶກສາ: ຈົບປະລິນຍາຕີຂຶ້ນໄປ
- ຂະແໜງ: ການຕະຫຼາດ, ການເງິນການທະນາຄານ, ເສດຖະກິດ, ບໍລິຫານທຸລະກິດ
- ຄະແນນສະເລ່ຍລວມສໍາລັບຜູ້ຈົບຢູ່ລາວ: ຈັດປະເພດແຕ່ເກດ (ຄະແນນ C+) ຂຶ້ນໄປ
- ຄະແນນສະເລ່ຍລວມສໍາລັບຜູ້ຈົບຢູ່ ສສ ຫວຽດນາມ: ຈັດປະເພດແຕ່ເກດ (ຄະແນນ C) ຂຶ້ນໄປ
- ມີຄວາມຮູ້ໃນການນໍາໃຊ້ຄອມພິວເຕີ້ (Microsoft Office)
- ຜູ້ສະໝັກຜູ້ໃດມີປະສົບການໃນວຽກງານທີ່ກ່ຽວຂ້ອງຈະພິຈາລະນາເປັນພິເສດ
- ມີມະນຸດສໍາພັນດີ ແລະ ສຸຂະພາບແຂງແຮງ

#### 3. ເອກະສານຍື່ນສະໝັກ

- ແບບຟອມສະໝັກວຽກ.
- ບັດປະຈໍາຕົວ ຫຼື ສໍາມະໂນຄົວ (ສະບັບ Copy).
- ໃບປະກາດ, ໃບຢັ້ງຢືນ, ໃບຄະແນນ (ສະບັບ Copy).
- ໃບຢັ້ງຢືນທີ່ຢູ່ ບໍ່ເກີນ 03 ເດືອນ.

## ຕໍາແໜ່ງ: ວິຊາການ ພັດທະນາຊອບແວ ຈໍານວນ: 01 ຕໍາແໜ່ງ

### ເງື່ອນໄຂຂອງຜູ້ສະໝັກ:

#### 1. ໜ້າທີ່ຮັບຜິດຊອບ

- ສໍາຫຼວດ, ວິເຄາະຄວາມຊັບຊ້ອນ ແລະ ຄວາມເປັນໄປໄດ້ຕາມຄວາມຕ້ອງການ ໃນການພັດທະນາຊອບແວ
- ປະຕິບັດ ອອກແບບລະອຽດ ແລະ ພັດທະນາໂປຣແກຣມ ທີ່ໄດ້ຮັບມອບໝາຍ.
- ປະຕິບັດ ທົດສອບໂປຣແກຣມ ກ່ອນທີ່ຈະມອບຮັບ.
- ບໍາລຸງຮັກສາຊອບແວ.
- ເຂົ້າຮ່ວມໂຄງການ ເຕັກໂນໂລຊີ-ຂໍ້ມູນຂ່າວສານ

#### 2. ເງື່ອນໄຂ ແລະ ມາດຕະຖານ

- ເພດ: ຊາຍ/ຍິງ, ອາຍຸບໍ່ເກີນ 35 ປີ
- ຈົບປະລິນຍາຕີ ຂຶ້ນໄປ
- ຂະແໜງ: ເຕັກໂນໂລຊີຂໍ້ມູນຂ່າວສານ, ໂທລະຄົມມະນາຄົມ, ຄວາມປອດໄພຂໍ້ມູນຂ່າວສານ ແລະ ຂະແໜງການທີ່ກ່ຽວຂ້ອງ
- ມີແນວຄິດສ້າງສັນໃນການພັດທະນາໂປຣແກຣມທີ່ດີ, ສາມາດຄົ້ນຄວ້າ ແລະ ແກ້ໄຂບັນຫາໄດ້ເປັນເອກະລາດ ຫຼື ເປັນກຸ່ມ.
- ມີທັກສະໃນການສ້າງເອກະສານວິຊາສະເພາະ ເພື່ອພັດທະນາຊອບແວ: ການວິເຄາະ, ສໍາຫຼວດຄວາມຕ້ອງການຂອງທຸລະກິດ, ວິເຄາະອອກແບບລະບົບ
- ຄວາມສາມາດຄົ້ນຄວ້າ, ກໍາແໜ້ນ ແລະ ນໍາໃຊ້ເຕັກໂນໂລຊີໃໝ່.
- ສໍາລັບຜູ້ທີ່ຈະຖືກພິຈາລະນາເປັນພິເສດ ມີຄື:
- ມີປະສົບການໃນການພັດທະນາ Front End, Mobile app, BackEnd
- ຊໍານິຊໍານານກ່ຽວກັບ HTML/HTML5, CSS/CSS3, Javascript,Jquery, Bootstrap, Atomic design, Responsive
- ມີປະສົບການກ່ຽວກັບ React.js, Vue.js, .NET MVC
- ມີຄວາມຮູ້ກ່ຽວກັບ webservice SOAP/Restful, message JSON, XML
- ນໍາໃຊ້ການພັດທະນາ IDEs ແລະ ເຄື່ອງມືການຄຸ້ມຄອງ source code, ຄຸ້ມຄອງວຽກງານ (CI/CD: Jenkin, GIT, ANT)
- ມີຄວາມຊໍານານໃນກ່ຽວກັບ. Net Core ຫຼື Java Core
- ມີຄວາມຊໍານານໃນພາສາໃດໜຶ່ງເຊັ່ນ Object C, Swift, Java, ReactNative, Flutter
- ມີຄວາມຮູ້ກ່ຽວກັບ DepOps, CI/CD, Docker
- ມີຄວາມຮູ້ໃນການປະຕິບັດໂຄງການທີ່ມີຫຼາຍຮູບແບບແຕກຕ່າງກັນເຊັ່ນ: agile, water-fall, Kanban...
- ມີປະສົບການກັບຖານຂໍ້ມູນ Oracle
- ສາມາດອ່ານພາສາອັງກິດໄດ້ດີ ແລະ ເຂົ້າໃຈເອກະສານພາສາອັງກິດສະເພາະ, ສື່ສານດີເປັນຂໍ້ໄດ້ປຽບ
- ມີຄວາມຮູ້ດ້ານພາສາອັງກິດໃນລະດັບດີ (ອ່ານ), ການສື່ສານ.
- ມີບຸກຄະລິກ ຄຸນສົມບັດດີ, ມີສຸຂະພາບແຂງແຮງ ແລະ ບໍ່ມີຄະດີຄວາມມາກ່ອນ

#### 3. ເອກະສານຍື່ນສະໝັກ

- ແບບຟອມສະໝັກວຽກ.
- ບັດປະຈໍາຕົວ ຫຼື ສໍາມະໂນຄົວ (ສະບັບ Copy).
- ໃບປະກາດ, ໃບຢັ້ງຢືນ, ໃບຄະແນນ (ສະບັບ Copy).
- ໃບຢັ້ງຢືນທີ່ຢູ່ ບໍ່ເກີນ 03 ເດືອນ.

## ຕໍາແໜ່ງ: ວິຊາການ ຄຸ້ມຄອງລະບົບ, ເຄືອຂ່າຍການສື່ສານ ຈໍານວນ: 01 ຕໍາແໜ່ງ

### ເງື່ອນໄຂຂອງຜູ້ສະໝັກ:

#### 1. ໜ້າທີ່ຮັບຜິດຊອບ

- ປະຕິບັດການຄຸ້ມຄອງລະບົບ ແລະ ອຸປະກອນເຄືອຂ່າຍສື່ສານທີ່ສູນປະມວນຜົນຫຼັກ ແລະ ສູນສໍາຮອງຂອງ LVB.
- ຄຸ້ມຄອງລະບົບເຊີບເວີ, ຈັດເກັບຂໍ້ມູນ, ສໍາຮອງ/ກູ້ຂໍ້ມູນທີ່ສູນປະມວນຜົນຫຼັກ ແລະ ສູນສໍາຮອງປ້ອງກັນໄພພິບັດ.
- ເຂົ້າຮ່ວມໃນການວາງແຜນ ແລະ ປັບປຸງປະສິດທິພາບຂອງລະບົບ ແລະ ເຄືອຂ່າຍສື່ສານ.
- ສຶກສາຄົ້ນຄວ້າ/ເຂົ້າຮ່ວມສຶກສາຄົ້ນຄວ້າ, ທົດລອງ, ດໍາເນີນງານຄວບຄຸມລະບົບ/ນະວັດຕະກໍາໃໝ່ກ່ຽວກັບເຄືອຂ່າຍສື່ສານ.

#### 2. ເງື່ອນໄຂ ແລະ ມາດຕະຖານ

- ຜູ້ສະໝັກ: ຊາຍ, ອາຍຸບໍ່ເກີນ 35 ປີ
- ລະດັບການສຶກສາ: ຈົບມະຫາວິທະຍາໄລຂຶ້ນໄປ ແລະ ຕ້ອງຈົບສາຂາທີ່ກ່ຽວຂ້ອງ (ດ້ານເຕັກໂນໂລຊີ-ຂໍ້ມູນ, ໂທລະຄົມ-ການສື່ສານ, ຄະນິດສາດຄອມພິວເຕີ, ວິທະຍາສາດຄອມພິວເຕີ, ລະບົບຂໍ້ມູນ, ວິສະວະກໍາເຕັກນິກ, ຄວາມປອດໄພຂໍ້ມູນ, ການຄວບຄຸມ)
- ສາມາດທໍາງານໃຕ້ຄວາມກົດດັນສູງ ແລະ ສາມາດຮັບວຽກຕິດຕາມກວດກາລະບົບ ແລະ ແກ້ໄຂຂໍ້ຜິດພາດຕາມໜ້າວຽກທີ່ໄດ້ມອບໝາຍ
- ມີສາມາດໃນການສຶກສາຄົ້ນຄວ້າ ແລະ ຮຽນຮູ້ເຕັກໂນໂລຊີໄດ້ໄວ
- ມີທັກສະໃນການສື່ສານ ແລະ ການແກ້ໄຂສະຖານະການ
- ສາມາດເຮັດວຽກເປັນທີມ ຫລື ໂດຍລໍາພັງ
- ມີທັດສະນະຄະຕິໃນການເຮັດວຽກທີ່ດີ, ມີຄວາມລະອຽດສູງ ແລະ ມີຄວາມທຸ່ມເທ
- ພິຈາລະນາເປັນພິເສດ ຖ້າມີໃບຢັ້ງຢືນວິຊາຊີບໃນສາຂາເຄືອຂ່າຍສື່ສານ ເຊັ່ນ: CCNA / CCNP / JNCIA / JNCIP ຫລືມີປະສົບການຢ່າງໜ້ອຍ 1 ປີ ໃນການບໍລິຫານຄຸ້ມຄອງລະບົບເຄືອຂ່າຍ ແລະ ອຸປະກອນຄວາມປອດໄພ (Firewall, Proxy ແລະ ອຸປະກອນຄວາມປອດໄພອື່ນໆ)
- ພິຈາລະນາເປັນພິເສດ ຖ້າມີໃບຢັ້ງຢືນ: MCITP-SA / Oracle Certified Associate / Oracle Solaris 11 System Administrator Certification
  Linux Professional Institute LPIC-1 ຫລືມີປະສົບການຢ່າງໜ້ອຍ 1 ປີ ໃນການບໍລິຫານຄຸ້ມຄອງລະບົບເຊີບເວີ ແລະ ລະບົບຖານຂໍ້ມູນ

#### 3. ເອກະສານຍື່ນສະໝັກ

- ແບບຟອມສະໝັກວຽກ.
- ບັດປະຈໍາຕົວ ຫຼື ສໍາມະໂນຄົວ (ສະບັບ Copy).
- ໃບປະກາດ, ໃບຢັ້ງຢືນ, ໃບຄະແນນ (ສະບັບ Copy).
- ໃບຢັ້ງຢືນທີ່ຢູ່ ບໍ່ເກີນ 03 ເດືອນ.

## ຕໍາແໜ່ງ: ວິຊາການ ຄຸ້ມຄອງແອບພຣິເຄຊັນ ຈໍານວນ: 01 ຕໍາແໜ່ງ

### ເງື່ອນໄຂຂອງຜູ້ສະໝັກ:

#### 1. ໜ້າທີ່ຮັບຜິດຊອບ

ການຄຸ້ມຄອງແອບພຣິເຄຊັນ ຂອງທະນາຄານ

#### 2. ເງື່ອນໄຂ ແລະ ມາດຕະຖານ

- ຜູ້ສະໝັກ: ຊາຍ/ຍິງ, ອາຍຸບໍ່ເກີນ 35 ປີ
- ລະດັບການສຶກສາ: ຈົບມະຫາວິທະຍາໄລຂຶ້ນໄປ ແລະ ຕ້ອງຈົບສາຂາທີ່ກ່ຽວຂ້ອງ (ດ້ານເຕັກໂນໂລຊີ-ຂໍ້ມູນ, ໂທລະຄົມ-ການສື່ສານ, ຄະນິດສາດຄອມພິວເຕີ, ວິທະຍາສາດຄອມພິວເຕີ, ລະບົບຂໍ້ມູນ, ວິສະວະກໍາເຕັກນິກ, ຄວາມປອດໄພຂໍ້ມູນ, ການຄວບຄຸມ)
- ມີຄວາມຮູ້ກ່ຽວກັບການພັດທະນາໂປຼແກຼມແອັບພລິເຄຊັນ, ບໍລິຫານຄຸ້ມຄອງ, ການທົດສອບລະບົບ.
- ມີຄວາມຮູ້ໃນການຕິດຕັ້ງ, ບໍລິຫານຄຸ້ມຄອງ ແລະ ນໍາໃຊ້ເຄື່ອງມືເຊັ່ນ: PL/SQL, IBM Tibco, IBM Portal ແລະ IBM Web, Apache Tomcat, Web Service, API,...
- ມີຄວາມຮູ້ ແລະ ທັກສະໃນການຈັດການຖານຂໍ້ມູນ Oracle
- ມີຄວາມຮູ້ກ່ຽວກັບ ຄວາມພ້ອມ ແລະ ການດໍາເນີນງານຂອງແອັບພລິເຄຊັນ: HA (High Availability), DR (Disater Recovery), LB (Load Balancing) ....
- ມີຄວາມສາມາດໃນການຄົ້ນຄ້ວາ, ຮຽນຮູ້, ນໍາສະເໜີ ແລະ ການນໍາໃຊ້ເຕັກໂນໂລຊີ, ສະເໜີວິທີການ ໃນການປັບປຸງລະບົບແອັບພລິເຄຊັນທີ່ໄດ້ຮັບມອບໝາຍ.
- ມີທັກສະ ແລະ ຄວາມຮູ້ໃນການຝຶກອົບຮົມ, ວິເຄາະ ແລະ ແກ້ໄຂບັນຫາທີ່ເກີດຂຶ້ນກັບແອັບພລິເຄຊັນ.
- ມີຄວາມຮູ້ດ້ານການດໍາເນີນງານຂອງທະນາຄານ ແລະ ລະບົບຊອບແວທະນາຄານ.
  ກໍລະນີພິເສດ: ຜູ້ທີ່ມີໃບຢັ້ງຢືນດ້ານ ເຕັກໂນໂລຊີ-ຂໍ້ມູນຂ່າວສານ.

#### 3. ເອກະສານຍື່ນສະໝັກ

- ແບບຟອມສະໝັກວຽກ.
- ບັດປະຈໍາຕົວ ຫຼື ສໍາມະໂນຄົວ (ສະບັບ Copy).
- ໃບປະກາດ, ໃບຢັ້ງຢືນ, ໃບຄະແນນ (ສະບັບ Copy).
- ໃບຢັ້ງຢືນທີ່ຢູ່ ບໍ່ເກີນ 03 ເດືອນ.